# ເບ່ນັກການເມືອງເພ້ນ້

ຮວບຮວມໂດຍ ບ.ກ.ລາວເນັດທ໌

ຄໍລັມນີ້ຂໍແນະນຳນັກການເມືອງອະເມຣິກັນທີ່ "ນິຕຍະສາຣລາວແນັດທ໌" ເຊື່ອວ່າຈະທຳຄຸນປໂຍດໃຫ້ກັບທ່ານຜູ້ອ່ານທຸກໆລະດັບ ໂດຍທີ່ພວກເຮົາໄດ້ທຳການຮວບຮ່ວມເກັບກຳເອົາຂໍ້ມູນຈາກທ່ານຜູ້ອ່ານບາງທ່ານທີ່ໄດ້ຈັດສົ່ງມາໃຫ້ ແລະທີ່ພວກເຮົາໄດ້ທຳການຄົ້ນຄວ້າມາ ທັງໝົດນັ້ນພວກເຮົາກໍເຊື່ອໝັ້ນວ່າຂໍ້ມູນທີ່ໄດ້ຮັບມາທັງໝົດນີ້ເປັນສິ່ງທີ່ໜ້າເຊື່ອຖືໄດ້ ແຕ່ພວກເຮົາບໍ່ສາມາດຮັບປະກັນຄວາມຖືກຕ້ອງໄດ້ ໃນຂນະດຽວກັນ "ລາວແນັດທ໌" ກໍພູມໃຈເປັນທີ່ສຸດຫາກວ່າທີ່ຜູ້ອ່ານຈະໄດ້ຊ່ອຍສົ່ງຂໍ້ມູນທີ່ເປັນຈິງເຂົ້າມາເພີ້ມເຕີມບໍ່ວ່າທ່ານຈະສນັບສນູນພັກການເມືອງໃດກໍດີ



ທ່ານ John Chiang,J.D.,Esq. ຜູ້ສະມັກຮັບເລືອກຕຳແໜ່ງການຄັງຂອງຣັຖຄາລີຟໍເນັຽ ແລະກໍເປັນຊາວເອເຊັຽ-ອະເມຣິກັນທີ່ມີຕຳແໜ່ງສູງສຸດໃນການໃຫ້ບໍຣິການແກ່ປະຊາຊົນ.

ທ່ານຈອນມີຖິ່ນກຳເນີດທີ່ນະຄອນນິວຢອກ ແລະມາໃຫຍ່ຢູ່ໃນຣັຖອິລີ່ນອຍສ໌ ເລີ່ມເຂົ້າເຮັດວຽກງານກັບ Internal Revenue Service ໃນຕຳແໜ່ງນັກກົດໝາຍຜູ້ຊ່ຽວຊານ ດ້ານພາສີອາກອນ ຕໍ່ມາກໍເປັນທະນາຍຄວາມປະຈຳ Office of the State Controller ຈົບການສຶກສາມາຈາກ Law Center ມະຫາວິທຍາໄລຈອນທາວ ໃນຂນະທີ່ກຳລັງສຶກສາຢູ່ນັ້ນທ່ານໄດ້ເປັນສະມາຊິກຂອງ Journal of Law Technology ຊຶ່ງເປັນທີ່ຮູ້ດີກັນວ່າການເປັນສະມາຊິກ ຫລືຜູ້ຂຽນບົດຄວາມຂອງ ວາຣະສາຣໃນໂຮງຮຽນກົດໝາຍນັ້ນແມ່ນເປັນຜູ້ທີ່ມີ ກຽດຢ່າງສູງສງ່າຂອງໂຮງຮຽນນັ້ນໆ ທ່ານຈອນຈົບການສຶກສາກຽດນິຍົມທາງດ້ານການເງິນຈາກມະຫາວິທຍາໄລຊາວທ໌ຟລໍຣິດ້າ.

ທ່ານຈອນຊຽງເປັນປະທານຂອງ Board of Equalization (BOE) ແລະກໍໄດ້ຮັບການຄັດເລືອກໃຫ້ກັບຄືນມາດຳຣົງຕຳແໜ່ງສມັຍທີ່ສອງໃນປີ 2002 ທ່ານຈັດເປັນນຶ່ງໃນສິບສອງຄົນ Consititutional Officer ຈາກຣັຖຄາລີຟໍເນັຽ ໃນຊ່ວງປີ 2004 ທ່ານຈອນໄດ້ຖືກຮັບເລືອກດ້ວຍຄະແນນສຽງທີ່ທ້ວມລົ້ນໃຫ້ເຂົ້າມາເປັນປະທານຂອງ BOE ເປັນຕົວແທນ BOE ເຂດທີ່ 4 ຊຶ່ງມີປະຊາຊົນອາສັຍຢູ່ 8.4 ລ້ານຄົນໃນ 73 ຕົວເມືອງທົ່ວ Los Angeles County ນອກຈາກນັ້ນທ່ານກໍຍັງເປັນສະມາຊິກຂອງ California Franchise Tax Board ຕື່ມອີກຕຳແໜ່ງນຶ່ງ.

ຕລອດໄລຍະເວລາທີ່ຢູ່ໃນຄນະກັມະການດັ່ງກ່າວນີ້ທ່ານຈອນໄດ້ສແດງຄວາມເປັນຜູ້ນຳໃນການໃຫ້ການສຶກສາ ແລະທຳການຊ່ອຍເຫລືອຜູ້ປະກອບທຸຣະກິຈຂນາດນ້ອຍ ອົງກອນຊຸມຊົນ ແລະຜູ້ເສັຽພາສີເປັນຜູ້ທີ່ໄດ້ລິເລີ້ມການສັມມະນາສຳຫລັບອົງກອນທີ່ບໍ່ຄ້າກຳໄລທີ່ຈັດໂດຍ Board of Equalization Franchise Tax Board, ແລະ Internal Revenue Service ແລະກໍໄດ້ຮ່ວມກັບ Assessor's Office ຂອງ Los Angeles County ຈັດການສັມມະນາກ່ຽວກັບພາສີໃຫ້ກັບອົງກອນທາງສາສນາ ນອກຈາກນີ້ໃນຖານະທີ່ເປັນສ່ວນນຶ່ງຂອງຄວາມສຳເຣັດທາງດ້ານການເງິນຂອງຊຸມຊົນທ່ານຈອນຍັງໄດ້ຈັດກອງປະຊຸມກ່ຽວກັບທຸຣະກິຈ ແລະແຮງງານເພື່ອທຳການຕໍ່ສູ້ກັບການຮຸກຮານດ້ານພາສີອາກອນໃນລະບົບເສຖກິຈໃຕ້ດິນ ສຳນັກງານຂອງທ່ານຍັງໄດ້ເປັນຕົວຕັ້ງຕົວຕີໃນການໃຫ້ຄຳປຶກສາທາງດ້ານພາສີອາກອນກ່ຽວກັບການເງິນ ແລະການຊ່ອຍເຫລືອແກ່ຜູ້ເຊົ່າບ້ານ ແລະຜູ້ທີ່ໃຫ້ເຊົ່າບ້ານທີ່ເປັນບູກຄົນໂດຍທົ່ວໄປ ຄົນແກ່ຊະລາ ແລະຜູ້ທີ່ເສັຽອົງຄະເປັນຕົ້ນ.

ຢູ່ໃນວົງການນິຕິບັນຍັດນັ້ນ ທ່ານຈອນໄດ້ໃຫ້ການສນັບສນູນຮ່າງກົດໝາຍຫລາຍກວ່າສະມາຊິກຄົນອື່ນໆຂອງບອດດ໌ໃນປະວັດສາດ 126 ປີທີ່ຜ່ານມານອກຈາກນີ້ການເລີ້ມເຣື້ອງອື່ນໆຂອງທ່ານຈອນຍັງເຮັດໃຫ້ເກີດມີການແບ່ງເບົາພາລະທາງດ້ານພາສີແກ່ຄູ່ສົມຣົສ ແລະຜູ້ທີ່ເກີດປັນຫາທາງດ້ານສຸຂພາບທີ່ບໍ່ສາມາດເບິ່ງແຍ່ງເຣື້ອງພາສີຂອງຕົວເອງໄດ້ຂຍາຍການຍົກເວັ້ນພາສີໂຮງຮຽນສຳຫລັບອົງກອນທີ່ບໍ່ສະແຫວງຫາຜົລກຳໄລ ແລະທຳການສນັບສນູນການລາຍງານພາສີທີ່ເປັນແບບອີ່ເລັກໂທຣນິກສ໌

ຕລອດປີທີ່ຜ່ານມານັ້ນ ທ່ານຈອນ ໄດ້ເປັນຜູ້ທີ່ມີບົດບາດໃນການໃຫ້ການບໍຣິການທັງລະດັບຣັຖ ແລະທ້ອງຖິ່ນ ປັດຈຸບັນນີ້ຢູ່ໃນຄນະກັມະການສູນກາງກົດໝາຍທີ່ກ່ຽວກັບເດັກນ້ອຍຂອງ Los Angeles ກ່ອນໜ້ານີ້ທ່ານເປັນສະມາຊິກຂອງ Advisory Big Sister ຂອງນະຄອນລອສແອັນເຈີລີສແລະກໍຍັງຢູ່ໃນຄນະກັມະການມູນນິທິ ເພື່ອເດັກນ້ອຍທີ່ຕິດເຊື້ອໂຣຄເອັດສ໌ອີກດ້ວຍ.

ທ່ານຈອນໄດ້ຮັບລາງວັນຈາກການຊ່ອຍເຫລືອຊຸມຊົນເປັນຈຳນວນຢ່າງຫລວງຫລາຍ ຮ່ວມໄປເຖິງລາງວັນ 2004 Millennium Momentum Foundation's Leadership Vanguard Award, ລາງວັນ Southern California Chinese Lawyers Association Distinguished Service Award ແລະລາງວັນ Democrats for Change Award for Outstanding Dedication and Service to the Community ນອກຈາກນີ້ກໍຍັງໄດ້ຮັບລາງວັນ American Council of Young Political Leaders ຕື່ມອີກ.



ຍານາງ JUDY CHU,Ph.D. ຜູ້ສະມັກຮັບເລືອກຕັ້ງ State Board Equalization ເຂດທີ່ 4 ປັດຈຸບັນນາງເປັນສະມາຊິກຂອງ California Assembly

ດຣ.ຊູ ນາງເປັນປະທານຄນະກັມະການ State Assembly Appropriations ແລະກັບຈົບກາຍເກີດ

ແລະເປັນສະມາຊິກຂອງຄນະກັມະການ Revenue and Taxation Committee ນອກຈາກນັ້ນນາງກໍຍັງເປັນຜູ້ຮ່າງກົດໝາຍນິຣະໂທດກັມແກ່ຜູ້ທີ່ມີຄວາມຜິດກ່ຽວກັບເຣື້ອງພາສີທີ່ທຳລາຍໄດ້ໃຫ້ແກ່ຣັຖບານຫລາຍກວ່າ 4,000 ພັນລ້ານດອນລາສະຫະຣັຖ ໂດຍທີ່ບໍ່ຕ້ອງໄດ້ຂຶ້ນພາສີອາກອນແລະການຮ່າງກົດໝາຍເພື່ອການຄູ້ມຄອງແກ່ຜູ້ບໍຣິໂພກທີ່ມີຄວາມຈຳກັດໃນການໃຊ້ພາສາອັງກິສຈາກການກືກເອົາລັດເອົາປຽບຈາກຜູ້ຄ້າຂາຍຣົຖຍົນແລະກໍຍັງມີກົດໝາຍເພື່ອເພີ້ມຄວາມສາມາດຂອງເດັກນ້ອຍທີ່ຍັງບໍ່ບັນລຸນິຕິພາວະໃນການຮ້ອງຮຽນການກົດກັ້ນການຈ້າງງານແລະກົດໝາຍຫ້າມການໃຊ້ສາຣເຄມີທີ່ເປັນພິດໃນເຄື່ອງແຕ່ງໜ້າຈາກສະຫະພາບຢູໂຣບໃນຊ່ວງປີ 2005 ທີ່ຜ່ານມານີ້ ດຣ.ຊູ ໄດ້ຮັບລາງວັນດີເດັ່ນ Consumer Action's Consumer Excellence ຈາກການຮ່າງກົດໝາຍການຄູ້ມຄອງຜູ້ບໍຣິໂພກໃນຕລາດ".

*This column features American politicians who Laonet believe, will act in the best interests of the majority of their readers based on the information collected by or submitted to Laonet Magazine. Although we believe that the information is reliable, we do not guarantee its accuracy and would appreciate any feedback. Political party affiliation is not a factor in the selection process. Laonet welcomes any input from any political party or affiliation about its candidate.*

JOHN CHIANG, J.D., Esq.: Current candidate for California Treasurer and the highest ranking Asian-American in public service. A native of New York, reared in Illinois, John began his career as a Tax Law Specialist with the Internal Revenue Service in Los Angeles. He later served as an attorney with the Office of the State Controller. John is a graduate of Georgetown University Law Center, where he was a member of the Journal of Law and Technology. As you may know, being a member of a law journal or an author of a law review in law school is a high honor in that law school. John is also an honors graduate of the University of South Florida with a degree in Finance.

John Chiang, Chair of the State Board of Equalization (BOE), was re-elected to his second term in 2002, as one of California's twelve Constitutional Officers. In 2004, John was elected by unanimous vote of his colleagues as Chair of the Board. John represents the BOE's 4th District which includes 8.5 million persons living in 73 cities throughout most of Los Angeles County. He also serves as a member of California's Franchise Tax Board.




Throughout his tenure on the Board, John provides ground-breaking leadership in educating and assisting small businesses, community organizations and taxpayers. He initiated the first Board of Equalization, Franchise Tax Board, and Internal Revenue Service seminar for nonprofit organizations and joined with the Los Angeles County Assessor's Office to hold tax seminars for religious organizations. As a partner in the community's financial success, John also organized business and labor forums on fighting tax evasion in the "underground economy." His office has pioneered direct taxpayer services by providing free income tax and Homeowner and Renter Assistance claim preparation for hundreds of individuals, senior citizens and persons with disabilities.

In the legislative arena, John has successfully sponsored more legislative proposals than any member in the Board's 126-year history. His initiatives have produced tax relief for innocent spouses and those medically unable to manage their own affairs, expanded property tax exemptions and appeals for nonprofit organizations, and promoted greater use of electronic tax filing.

Throughout the years, John has been active in state and local community service. He currently serves on the Board of the Children's Law Center of Los Angeles. John previously served as a Member of the Advisory Council of Big Sisters of Los Angeles and Board Member for the Children Affected by AIDS Foundation.

Among John's 2004 awards for community service are: the 2004 Millennium Momentum Foundation's Leadership Vanguard Award, the Southern California Chinese Lawyers Association Distinguished Service Award and the Democrats for Change Award for Outstanding Dedication and Service to the Community. He was also selected to the American Council of Young Political Leaders.

JUDY CHU, Ph. D.: Current Candidate for the State Board Equalization, District 4 and is currently a California assembly member.

Dr. Chu is the chair of the State Assembly Appropriations Committee, and a member of the Assembly Revenue and Taxation Committee. Dr. Chu authored a landmark tax amnesty bill that produced over $4 billion in revenue for the state without raising taxes. She authored legislation to protect limited-English speaking consumers from unscrupulous car dealers, to improve the ability of a minor to file an employment discrimination claim and to ban the toxic chemical, phthalates, from cosmetic products as is done in the European Union. In 2005, she received Consumer Action's Consumer Excellence Award for her legislation protecting consumers and their needs in the marketplace.